Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ແຄມພິໂລແບັກເທີ [CAMPYLOBACTER]

**ແຄມພິໂລແບັກເທີຄືຫຍັງ?**

ແຄມພິໂລແບັກເທີເປັນແບັກແທເລຍເຊິ່ງສາມາດເຮັດໃຫ້ມີອາການທາງລຳໄສ້

**ແຄມພິໂລແບັກເທີແຜ່ລາມແນວໃດ?**

ພະຍາດຕິດຕໍ່ແຄມພິໂລແບັກເທອາດຈະແຜ່ລາມໄດ້ໂດຍວິທີດັ່ງຕໍ່ໄປນີ້:

- ການກິນ ຫລື ຈັບຕ້ອງໄກ່, ໄກ່ງວງ,ຫລື ເປັດທີ່ດິບ ຫລື ເຮັດບໍ່ສຸກ.
- ການກິນໝາກໄມ້ ຫລື ຜັກທີ່ມີເຊື້ອໂຣກນີ້ເຈືອປົນຢູ່ນຳ ຫລື ການດື່ມນົມທີ່ບໍ່ທັນໄດ້ຂ້າເຊື້ອໂຣກເທື່ອ.
- ບາງຄັ້ງແຜ່ລາມໂດຍກົງນຳຄົນ ຫລື ສັດທີ່ມີເຊື້ອໂຣກນີ້.

**ອາການບາງຢ່າງມີຫຍັງແດ່?**

ຕາມທຳມະດາອາການຈະເລີ່ມຂຶ້ນ 2 ຫາ 5 ມື້ຫລັງຈາກຕິດແທດ, ຈະເປັນປະມານອາທິດໜຶ່ງ ແລະ ອາດຈະມີອາການດັ່ງຕໍ່ໄປນີ້:

- ປຸ້ນທ້ອງປວດຮາກ
- ຮາກ
- ລົງທ້ອງ (ອາດຈະມີເລືອດ)
- ເຈັບທ້ອງນ້ອຍ
- ປວດທ້ອງ
- ຄີງຮ້ອນ

**ຈະກວດພົບໂແຄມພິໂລແບັກເທີໄດ້ແນວໃດ?**

ໂດຍການກວດໃນຫ້ອງວິໄຈ (ກວດອາຈົມ).

**ວິທີຮັກສາມີຫຍັງແດ່?**

ຄົນສ່ວນຫລາຍຈະດີຂື້ນປາດສະຈາກການຮັກສາ. ໃນກໍລະນີທີ່ມີອາການລົງທ້ອງຢ່າງໜັກ, ທ່ານໝໍອາດຈະສັ່ງໃຫ້ກິນຢາຕ້ານທານ. ໃຫ້ດື່ມນ້ຳຫລາຍໆ, ຮ່ວມດ້ວຍນ້ຳ ເອເລກໂທຣໄລດ ດັ່ງເຊັ່ນ ເກໂທແຣດ, ເຊິ່ງສາມາດປ້ອງກັນບໍ່ໃຫ້ຂາດນ້ຳໃນຮ່າງກາຍໄດ້.

**ຈະປ້ອງກັນຈາກແຄມພິໂລແບັກເທີດ້ວຍວິທີໃດ?**

- ເຮັດອາຫານທີ່ເປັນໄກ່ ແລະ ໄກ່ງວງໃຫ້ສຸກດີ.
- ຫ້າມບໍ່ໃຫ້ກິນໄກ່ ຫລື ໄກ່ງວງທີ່ບໍ່ສຸກ.
- ລ້າງມືດ້ວຍສະບູກ່ອນ ແລະ ຫລັງຈາກຈັບຊີ້ນດິບ.
- ຫລີກລ້ຽງຈາກນ້ຳນົມທີ່ບໍ່ທັນໄດ້ຂ້າເຊື້ອໂຣກ ຫລື ນ້ຳທີ່ບໍ່ສະອາດ.
- ໃຫ້ແນ່ໃຈວ່າຄົນທີ່ລົງທ້ອງ, ໂດຍສະເພາະເດັກນ້ອຍ, ລ້າງມືຂອງເຂົາເຈົ້າໃຫ້ສະອາດດ້ວຍສະບູ ແລະ ນ້ຳ.
- ລ້າງມືດ້ວຍສະບູ ແລະ ນ້ຳຫລັງຈາກຈັບອາຈົມຂອງສັດລ້ຽງ (ຂີ້ຂອງສັດລ້ຽງ).

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ພະຍາດຕິດຕໍ່ແຄມພິໂລແບັກເທີ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes for Health
www.nlm.nih.gov/medlineplus/ency/article/000224.htm

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org